ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ເລກທີ.....1311.../ຈຂ.ຫພ

ຫົວພັນ, ລົງວັນທີ..11./...10./.2022

# ຂໍ້ຕົກລົງ

# ວ່າດ້ວຍການ ປະເມີນລາຄາທີ່ດິນຢູ່ ແຂວງ ຫົວພັນ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14ທັນວາ 2015, ໝວດທີ IV ມາດຕາ 19 ແລະ 20 ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ສະບັບເລກທີ 395/ພສຂ, ລົງວັນທີ 29/ 7/2022.

## ເຈົ້າແຂວງຫົວພັນຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ມາດຕະການ ແລະ ວິທີການ ໃນການປະເມີນລາຄາທີ່ດິນ ແຕ່ລະເຂດໃນ 10 ເມືອງຂອງແຂວງຫົວພັນ, ເພື່ອເຮັດໃຫ້ການຄຸ້ມຄອງ-ບໍລິຫານທີ່ດິນ, ການຄິດໄລ່ຄ່າທຳນຽມຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ອາກອນລາຍໄດ້ເຂົ້າງົບປະມານແຫ່ງລັດຖືກຕ້ອງຕາມລະບຽບ ແລະ ກົດໝາຍ ເພື່ອຕອບສະໜອງໃຫ້ແກ່ການພັດທະນາທີ່ດິນມີຄວາມສອດຄ່ອງຕາມຄ່ອງຕາມສະພາບຕົວຈິງ.

### ມາດຕາ 2 ການປະເມີນລາຄາທີ່ດິນ

ການປະເມີນລາຄາທີ່ດິນ ແມ່ນການກຳນົດມູນຄ່າທີ່ດິນຂອງແຕ່ລະເຂດ, ຢູ່ໃນແຕ່ລະທ້ອງຖິ່ນ ແລະ ແຕ່ລະປະເພດຢູ່ແຂວງ ຫົວພັນ ໂດຍອີງໃສ່ຈຸດພິເສດທາງດ້ານທີ່ຕັ້ງ, ພູມສັນຖານ, ພື້ນຖານໂຄງລ່າງ ແລະ ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນແຕ່ລະໄລຍະ;

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຄ່າທຳນຽມ** ໝາຍເຖິງ ຄ່າຄຸ້ມຄອງບໍລິຫານລັດທີ່ເກັບເປັນເງິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມໂດຍຜ່ານການຢັ້ງຢືນຈາກຂະແໜງການຂອງລັດ;

2. **ຈົດທະບຽນນິຕິກຳທີ່ດິນ** ໝາຍເຖິງ ຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ການບັນທຶກ, ຢັ້ງຢືນສິດນຳໃຊ້ທີ່ດິນດັ່ງກ່າວໃຫ້ເຊົ່າ, ເປັນຫຼັກຊັບຄ້ຳປະກັນ, ຂາຍຝາກ, ສືບທອດມູນມໍຣະດົກຊື້-ຂາຍ, ແລກປ່ຽນ, ມອບໂອນ ແລະ ອື່ນໆ;

3. **ແຜນທີ່ເຂດປະເມີນລາຄາທີ່ດິນ** ໝາຍເຖິງ ແຜນທີ່ ທີ່ໄດ້ກຳນົດໄວ້ ເພື່ອການປະເມີນໃນແຕ່ລະເຂດ, ແຜນທີ່ແຕ່ລະສະບັບ ຈະກວມເອົາພື້ນທີ່ໃນຂອບເຂດຂອງເມືອງ ທີ່ມີການສຳຫຼວດ, ກຳນົດເຂດ ແລະ ມີສັນຍາລັກກຳກັບ ເປັນຕົວອັກສອນພາສາ ສາກົນ (A, B, C, D, E, F, G, H, I ແລະ J) ຊຶ່ງເປັນສັນຍາລັກຂອງແຕ່ລະເມືອງ ແລະ ຈະຖືກແບ່ງອອກເປັນຫຼາຍເຂດຍ່ອຍ ເອີ້ນວ່າ ເຂດປະເມີນລາຄາທີ່ດິນ ແຜນທີ່ເຂດປະເມີນລາຄາທີ່ດິນ ແມ່ນຖືກສ້າງຂຶ້ນເປັນເອກະສານຊ້ອນທ້າຍ ເພື່ອນຳໃຊ້ເຂົ້າໃນລະບົບ ການປະເມີນລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້;

4. **ເຂດປະເມີນລາຄາທີ່ດິນ** ໝາຍເຖິງ ເຂດຍ່ອຍນອນໃນເຂດພື້ນທີ່ ຕາມແຜນທີ່ປະເມີນລາຄາທີ່ດິນຂອງເມືອງໂດຍອີງໃສ່ລັກສະນະພື້ນຖານຄື: ເຂດການຄ້າ-ບໍລິການ, ເຂດທີ່ຢູ່ອາໄສ,ເຂດກະສິກຳ, ເຂດອຸດສາຫະກຳ ຕາມເຂດຕົວເມືອງ, ເຂດອ້ອມໃຈກາງເມືອງ, ເຂດຂະຫຍາຍຕົວເມືອງ, ເຂດຊານເມືອງ, ເຂດກຳລັງພັດທະນາ ທີ່ໄດ້ກຳນົດໄວ້ຕາມຜັງເມືອງ ແລະ ເຂດອື່ນໆ.

ເຄື່ອງໝາຍ ຫຼື ສັນຍາລັກ ເຂດປະເມີນລາຄາທີ່ດິນ:

**A1 - A27 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ຊຳເໜືອ

**B1 - B18 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບ ເມືອງ ວຽງໄຊ

**C1 - C11 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບ ເມືອງ ຊຳໃຕ້;

**D1 - D11 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ກ້ອນ;

**E1 - E22 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ສົບເບົາ;

**F1 - F17 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບ ເມືອງ ຊຽງຄໍ້;

**G1 - G16 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ແອດ;

**H1 - H14 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ຫົວເມືອງ

**I1 - I13 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ຮົ້ຽມ;

**J1 - J12 ໝາຍເຖິງ** ເຂດປະເມີນທີ່ດິນ ຂອງຈຳນວນບ້ານທັງໝົດ ທີ່ຂຶ້ນກັບເມືອງ ຊ່ອນ.

5. **ຕາຕະລາງການປະເມີນລາຄາທີ່ດິນ ໝາຍເຖິງ** ຫົວໜ່ວຍຄິດໄລ່ລາຄາທີ່ດິນ ທີ່ໄດ້ກຳນົດ ຢູ່ໃນຕາຕະລາງຂອງແຕ່ລະເຂດປະເມີນມູນຄ່າດິນ, ຜ່ານການເກັບກຳຂໍ້ມູນ, ການຄົ້ນຄວ້າ ແລະ ຮັບຮອງຈາກທ້ອງຖິ່ນໂດຍຈັດແບ່ງບັນດາຕອນດິນອອກເປັນ 4 ປະເພດຂອງເສັ້ນທາງຄື:

- **ທາງສາຍຫຼັກ ໝາຍເຖິງ** ເສັ້ນທາງເຊື່ອມຕໍ່ລະຫວ່າງປະເທດ, ເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງກັບແຂວງ, ເສັ້ນທາງເຊື່ອມຕໍ່ເມືອງກັບເມືອງ ແລະ ເສັ້ນທາງທີ່ຢູ່ໃນເຂດການຄ້າ-ການບໍລິການ ກຳນົດໃນແຜນທີ່ເປັນສີບົວ;

- **ທາງສາຍເຊື່ອມຕໍ່ ໝາຍເຖິງ** ເສັ້ນທາງແຍກອອກຈາກເສັ້ນທາງສາຍຫຼັກເຊື່ອມຕໍ່ລະຫວ່າງເມືອງຕໍ່ເມືອງ ແລະ ບ້ານຕໍ່ບ້ານ ກຳນົດໃນແຜນທີ່ເປັນສີຟ້າ;

- **ທາງສາຍແຈກ ຫລື ທາງຮ່ອມ ໝາຍເຖິງ** ເສັ້ນທາງໃນຂົງເຂດພາຍໃນບ້ານກຳນົດໃນແຜນທີ່ເປັນສີຂຽວ;

- ທາງດັ້ງເດີມ ໝາຍເຖິງ ເສັ້ນທາງແບບທຳມະຊາດ, ຍັງບໍ່ທັນໄດ້ຮັບການພັດທະນາ, ການສັນຈອນບໍ່ທັນສະດວກ ແລະ ເສັ້ນທາງດັ່ງກ່າວ ບໍ່ໄດ້ສະແດງສັນຍາລັກ ຫຼື ເປັນສີໃດໜຶ່ງຢູ່ໃນແຜນທີ່ເຂດປະເມີນເຂດລາຄາທີ່ດິນ ແລະ ບໍ່ສະແດງເສັ້ນທາງໃນໃບຕາດິນ.

## ມາດຕາ 4 ນະໂຍບາຍຂອງລັດ

ລັດ ສົ່ງເສີມທຸກພາກສ່ວນເສດຖະກິດ-ສັງຄົມ, ບຸກຄົນ, ນິຕິບຸກຄົນ ປະກອບສ່ວນເຂົ້າໃນການຄຸ້ມຄອງປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ມີປະສິດທິຜົນດ້ວຍການວາງນະໂຍບາຍ, ອອກກົດໝາຍ, ມະຕິ, ນິຕິກຳໃຕ້ກົດໝາຍ ແລະ ມີວິທີການ, ມາດຕະການຕ່າງໆເພື່ອເຮັດໃຫ້ທີ່ດິນມີຄຸນນະພາບດີ, ມີມູນຄ່າເພີ່ມຂຶ້ນ ທັງການຄຸ້ມຄອງບໍລິຫານທີ່ດິນ ແລະ ການຈົດທະບຽນນິຕິກຳການປ່ຽນແປງ ແລະ ການເຄື່ອນໄຫວສິດຄຸ້ມຄອງ ແລະ ສິດນຳໃຊ້ທີ່ດິນເຂົ້າສູ່ລະບຽບຫຼັກການ, ລວມສູນເປັນເອກະພາບ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດທີ່ໄດ້ກຳນົດໄວ້;

ລັດ ຄຸ້ມຄອງ ແລະ ຮັບປະກັນສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຕໍ່ບຸກຄົນທີ່ໄດ້ຮັບສິດນຳໃຊ້ທີ່ດິນຢ່າງສະເໝີພາບ, ມີປະສິດທິຜົນ, ມີຄວາມສະຫງົບ, ປົກກະຕິ ແລະ ຍາວນານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

ລັດ ມີນະໂຍບາຍຄົ້ນຄ້ວາກຳນົດອັດຕາສ່ວນຫຼຸດ ລາຄາຫົວໜ່ວຍຄິດໄລ່ທີ່ດິນຕາມສະພາບເງື່ອນໄຂຄວາມເປັນຈິງໃນການປົກປັກຮັກສາ, ນຳໃຊ້ ແລະ ພັດທະນາທີ່ດິນໃນແຕ່ລະໄລຍະ ເພື່ອເປັນການສົ່ງເສີມທຸກພາກສ່ວນປະກອບສ່ວນເຂົ້າໃນການຄຸ້ມຄອງ, ນຳໃຊ້ຖືກຕາມເປົ້າໝາຍ, ປົກປັກຮັກສາ ແລະ ພັດທະນາທີ່ດິນແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຢ່າງມີປະສິດທິຜົນ, ສອດຄ່ອງກັບນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນິຕິກຳຂອງອົງການປົກຄອງທ້ອງຖິ່ນວາງອອກແຕ່ລະໄລຍະ.

## ມາດຕາ 5 ຫຼັກການ ຂອງການປະເມີນລາຄາທີ່ດິນ

ການປະເມີນລາຄາທີ່ດິນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ຜັງເມືອງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ;
2. ສອດຄ່ອງກັບຄວາມເປັນຈິງຂອງການຊື້-ຂາຍໃນປະຈຸບັນ;
3. ຮັບປະກັນການມີສ່ວນຮ່ວມຂອງລັດ, ບຸກຄົນ, ນິຕິບຸກຄົນ;
4. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
5. ຮັບປະກັນຫຼັກການວິທະຍາສາດ ແລະ ລວມສູນປະຊາທິປະໄຕ.

## ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະຢູ່ແຕ່ຂອບເຂດ ແຂວງຫົວພັນເທົ່ານັ້ນ, ເຊິ່ງມີຜົນບັງຄັບໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບການຈົດທະບຽນນິຕິກຳກ່ຽວກັບການປ່ຽນແປງ, ການໂອນກຳມະສິດທີ່ດິນເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຢູ່ຂອບເຂດ ແຂວງຫົວພັນ.

## ໝວດທີ II

## ການກຳນົດເຂດປະເມີນລາຄາ, ຮູບແບບ ແລະ ການເກັບຮັກສາເອກະສານ ການປະເມີນລາຄາທີ່ດິນ

ມາດຕາ 7 ການກຳນົດເຂດປະເມີນລາຄາທີ່ດິນ

ເຂດປະເມີນລາຄາທີ່ດິນຂອງບັນດາເມືອງ ໃນທົ່ວແຂວງກຳນົດ ດັ່ງນີ້:

1. ເມືອງ ຊຳເໜືອ ລະຫັດ A ມີເຂດປະເມີນ (A1- A27)

| ລະຫັດເຂດ | ຊື່ບ້ານ (ລວມມີ 110 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງ ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| A1<br>ເຂດການຄ້າ | ບ້ານ ພົນໄຊ<br>ບ້ານ ນາທົ່ງຈອງ | 1.500.000 | 1.200.000 | 600.000 | - |
| A2 | ບ້ານ ນາທົ່ງຈອງ<br>ບ້ານ ນາວຽງ<br>ບ້ານ ພົນໄຊ<br>ບ້ານ ນາສະກາງ<br>ບ້ານ ມີສຸກ<br>ບ້ານ ນາໜອງບົວ | 1.200.000 | 400.000 | 250.000 | 100.000 |
| A3 | ບ້ານ ພົນໄຊ<br>ບ້ານ ຫາດເມືອງ<br>ບ້ານ ໂພໄຊ | 1.200.000 | 450.000 | 300.000 | 120.000 |
| A4 | ບ້ານ ໂພໄຊ<br>ບ້ານ ຊຳເໜືອ<br>ບ້ານ ນາລື<br>ບ້ານ ຫາດເມືອງ | 500.000 | 250.000 | 100.000 | 50.000 |
| A5 | ບ້ານ ນາທົ່ງຈອງ<br>ບ້ານ ຫາດເມືອງ<br>ບ້ານ ນາໜອງບົວ<br>ບ້ານ ນາວຽງ | 800.000 | 300.000 | 120.000 | 50.000 |
| A6 | ບ້ານ ນາທອງ<br>ບ້ານ ໂພນຄຳ | 500.000 | 250.000 | 80.000 | 30.000 |
| A7 | ບ້ານ ທີວຄັງ<br>ບ້ານ ຫ້ວຍຂອງ | 70.000 | 50.000 | 15.000 | 5.000 |

| | | | | | |
|---|---|---|---|---|---|
| A8 | ບ້ານ ປ່າຈ້າ<br>ບ້ານ ລ້ອງເອືອດ<br>ບ້ານ ໂພນສະຫວ່າງ<br>ບ້ານ ລ້ອງເມົ່າ<br>ບ້ານ ອໍ້<br>ບ້ານ ນໍ້າກຸບ-ນາເຊັງ | - | 30.000 | 5.000 | 2.000 |
| A9 | ບ້ານ ຂິວດິນ<br>ບ້ານ ໜອງຄ້າງ | - | 40.000 | 8.000 | 2.500 |
| A10 | ບ້ານ ໜອງແດງ<br>ບ້ານ ນາເອົ່າ<br>ບ້ານ ສະແນນ<br>ບ້ານ ບວຍ | - | 15.000 | 3.000 | 1.000 |
| A11 | ບ້ານ ກໍ່<br>ບ້ານ ງິ້ວ<br>ບ້ານ ກ້ານ<br>ບ້ານ ປຸ່ງ | - | 100.000 | 50.000 | 10.000 |
| A12 | ບ້ານ ສີວິໄລ<br>ບ້ານ ອີ້ງ<br>ບ້ານ ກາງ<br>ບ້ານ ຖໍ້າ<br>ບ້ານ ຫ້ວຍໄຄ້<br>ບ້ານ ຫົວຊຽງ<br>ບ້ານ ລູ້<br>ບ້ານ ຫ້ວຍຫ້ອມ<br>ບ້ານ ມ່ອນ | - | 40.000 | 15.000 | 3.000 |
| A13 | ບ້ານ ນໍ້າອີ້<br>ບ້ານ ກໍໄຮ<br>ບ້ານ ຄັງຖີ່<br>ບ້ານ ແກ່ວກ້ອາງ<br>ບ້ານ ນາພຽງ<br>ບ້ານ ຫ້ວຍຖຸມ | - | 15.000 | 3.000 | 1.000 |
| A14 | ບ້ານ ເມືອງຍືດ<br>ບ້ານ ຫ້ວຍມ້າ<br>ບ້ານ ສີບກ່າ | - | 15.000 | 2.000 | 800 |
| A15 | ບ້ານ ຊາງຄໍາ-ນາຄໍາ<br>ບ້ານ ນາຄາ-ພູປຽດ | - | - | 3.000 | 1.000 |
| A16 | ບ້ານ ທາດເມືອງ | | | | |

| | | | | | |
|---|---|---|---|---|---|
| | ບ້ານ ພັນໄຊ | - | - | 200.000 | 50.000 |
| A17 | ບ້ານ ນາສະກາງ<br>ບ້ານ ມີສຸກ<br>ບ້ານ ນາອ່າງ | 100.000 | 80.000 | 15.000 | 5.000 |
| A18 | ບ້ານ ຫ້ວຍຫີນດຳ<br>ບ້ານ ຫຼັກ12<br>ບ້ານ ຫ້ວຍແປກ<br>ບ້ານ ຫ້ວຍສານ<br>ບ້ານ ບັນ | 12.000 | - | 3.000 | 1.000 |
| A19 | ບ້ານ ຣາມເໜືອ<br>ບ້ານ ຣາມໃຕ້<br>ບ້ານ ນາເມືອງ<br>ບ້ານ ຫຼັກຊາວ<br>ບ້ານ ດອນ<br>ບ້ານ ເມືອງປອງ<br>ບ້ານ ຕະບີງ | 15.000 | 7.000 | 4.000 | 1.500 |
| A20 | ບ້ານ ໂພນໄຊ<br>ບ້ານ ນາສະລາ<br>ບ້ານ ສະເຫຼີ້ຍ | 20.000 | - | 6.000 | 2.000 |
| A21 | ບ້ານ ຢາດ<br>ບ້ານ ຫ້ວຍຊ້ອນ<br>ບ້ານ ນາໜອງ | - | - | 1.000 | 500 |
| A22 | ບ້ານ ຫ້ວຍຄີງ<br>ບ້ານ ພຽງດີ<br>ບ້ານ ຕະບີງ<br>ບ້ານ ຫ້ວຍສາດ<br>ບ້ານ ຫົວພູ<br>ບ້ານ ທັບເຜີ້ງ | - | 5.000 | 1.500 | 500 |
| A23 | ບ້ານ ຫ້ວຍຍອງ<br>ບ້ານ ຄີດ<br>ບ້ານ ແປ້ນ<br>ບ້ານ ກາງນ້ຳ<br>ບ້ານ ນາສະມອງ<br>ບ້ານ ສິບຊາຍ | - | - | 1.000 | 500 |
| A24 | ບ້ານ ເມືອງແວ່ນ<br>ບ້ານ ນາກາວ<br>ບ້ານ ນາຄູນ | - | 8.000 | 2.000 | 800 |

| | | | | | |
|---|---|---|---|---|---|
| | ບ້ານ ນາຫ້ວຍ<br>ບ້ານ ນາຈອງ | | | | |
| A25 | ບ້ານ ເຮົ້າໃຕ້<br>ບ້ານ ເຮົ້າເໜືອ<br>ບ້ານ ນາຄ້ຳ<br>ບ້ານ ພຽງຄັງ | - | - | 1.000 | 500 |
| A26 | ບ້ານ ນາດອງ<br>ບ້ານ ພຽງ<br>ບ້ານ ທົ້ມ<br>ບ້ານ ຫ້ວຍທານ<br>ບ້ານ ນາຕ້າງ<br>ບ້ານ ເຕື້ອມ<br>ບ້ານ ຫ້ວຍຕັງ<br>ບ້ານ ໂຄ້ງ<br>ບ້ານ ນາຄໍາ<br>ບ້ານ ນາລືມ<br>ບ້ານ ຮັງຮອນ<br>ບ້ານ ຫ້ວຍຍາບ | - | 4.000 | 1.500 | 500 |
| A27 | ບ້ານ ຫາດກອກ<br>ບ້ານ ດິນແດງ<br>ບ້ານ ຜາປັດ-ປ່າຈ້າ<br>ບ້ານ ຄັງໂຄ່<br>ບ້ານ ພູໂລນ<br>ບ້ານ ຫ້ວຍໂຄ່<br>ບ້ານ ປ່າຫວານ<br>ບ້ານ ຄັງແຄກ<br>ບ້ານ ພູຫຼວງ<br>ບ້ານ ຕະເອົ້າ-ນາເຢີງ | - | - | 1.200 | 300 |

2. ເມືອງ ວຽງໄຊ ລະຫັດ B ມີເຂດປະເມີນ (B1- B19)

| ລະຫັດເຂດ | ຊື່ບ້ານ (ລວມມີ 104 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງ ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| B1 | ບ້ານ ວຽງໄຊ | | | | |

| | | | | | |
|---|---|---|---|---|---|
| | ບ້ານ ນາໄກ່<br>ບ້ານ ລ້ອງກູ້ | 200.000 | 120.000 | 40.000 | 15.000 |
| B2 | ບ້ານ ລ້ອງກູ້<br>ບ້ານ ບັກ<br>ບ້ານ ພູໄຊ | 200.000 | 120.000 | 25.000 | 7.000 |
| B3 | ບ້ານ ນາແຫ່ນ<br>ບ້ານ ທາງລ້ອງ<br>ບ້ານ ນາປຸ່ງ<br>ບ້ານ ເມືອງລຽດ<br>ບ້ານ ສຳພັນໄຊ<br>ບ້ານ ຫ້ວຍຫຍ້າ | 80.000 | - | 25.000 | 5.000 |
| B4 | ບ້ານ ສຳພັນໄຊ<br>ບ້ານ ວັງໄຮ<br>ບ້ານ ນາລຸ້ງ<br>ບ້ານ ນາມ່າວ<br>ບ້ານ ນາແຮງ<br>ບ້ານ ລຸນ<br>ບ້ານ ເມືອງປານ<br>ບ້ານ ເໜືອດ<br>ບ້ານ ພູເໜືອດ<br>ບ້ານ ນາໂພ | 25.000 | 8.000 | 3.000 | 1.500 |
| B5 | ບ້ານ ເມືອງປິວ<br>ບ້ານ ໂຮມພັນ<br>ບ້ານ ນາສາ<br>ບ້ານ ປຸ່ງປິວ<br>ບ້ານ ໂພນທອງ | 30.000 | - | 6.000 | 2.000 |
| B6 | ບ້ານ ກະລືມ<br>ບ້ານ ວັງແຊງ | 20.000 | - | 3.000 | 1.000 |
| B7 | ບ້ານ ປອກ<br>ບ້ານ ນາຈອງ<br>ບ້ານ ລ້ອງກ້ານ<br>ບ້ານ ຕະແອ້ນ | - | - | 2.500 | 1.000 |

| | | | | | |
|---|---|---|---|---|---|
| | ບ້ານ ຝາດ<br>ບ້ານ ຫ້ວຍມ່ວງ | | | | |
| B8 | ບ້ານ ຕອງ<br>ບ້ານ ຊຽງແກນ<br>ບ້ານ ສາດ<br>ບ້ານ ເອີນ<br>ບ້ານ ເປີນ<br>ບ້ານ ມົ້ນ<br>ບ້ານ ລ້ອງເລົາ<br>ບ້ານ ພຽງລຽງ<br>ບ້ານ ບໍ່ຜາ | - | - | 2.500 | 1.000 |
| B9 | ບ້ານ ນາອີດ<br>ບ້ານ ຊຽງລວງ<br>ບ້ານ ລ້ອງກູ້<br>ບ້ານ ນາມອນ | 50.000 | - | 8.000 | 3.000 |
| B10 | ບ້ານ ນາຄາວ<br>ບ້ານ ປຸ່ງນາຄາວ<br>ບ້ານ ນາເຮັຍ<br>ບ້ານ ຄໍ້<br>ບ້ານ ນາສ້ານ<br>ບ້ານ ຊຽງແມນ<br>ບ້ານ ກ້າງຫາດ<br>ບ້ານ ກ້າງເມືອງ<br>ບ້ານ ກ້າງມີງ | 30.000 | - | 6.000 | 2.000 |
| B11 | ບ້ານ ພູນສ້ານ<br>ບ້ານ ພູນເໜືອ<br>ບ້ານ ພູນເກົ່າ<br>ບ້ານ ພູນກາງ | 20.000 | - | 3.000 | 1.000 |
| B12 | ບ້ານ ພູນໃໝ່<br>ບ້ານ ໃສຍ | 40.000 | - | 6.000 | 2.000 |
| | ບ້ານ ຊຽງ<br>ບ້ານ ສິ້ມ | | | | |

| | | | | | |
|---|---|---|---|---|---|
| B13 | ບ້ານ ເດີຍ<br>ບ້ານ ດ່ານ<br>ບ້ານ ງົ້ວ<br>ບ້ານ ແທ່ນ<br>ບ້ານ ກ້ຽນ | 20.000 | - | 3.000 | 1.000 |
| B14 | ບ້ານ ນາຍ້າງ<br>ບ້ານ ດ່ານໄຊ<br>ບ້ານ ດ່ານທອງ | 5.000 | - | 800 | 200 |
| B15 | ບ້ານ ນາຝຸ່ງ<br>ບ້ານ ນາງົວ<br>ບ້ານ ນາທໍ່<br>ບ້ານ ຈາດ<br>ບ້ານ ນາຕານ<br>ບ້ານ ສົ້ງ<br>ບ້ານ ແຮ້ວ<br>ບ້ານ ວຽງ<br>ບ້ານ ແຍ້<br>ບ້ານ ພຽງຄາ<br>ບ້ານ ອ່າງກວັນ<br>ບ້ານ ອ່າງສົ້ງ<br>ບ້ານ ອ່າງລັ່ງ<br>ບ້ານ ພຽງເຈັຍ<br>ບ້ານ ໂພນໄຊ | - | - | 2.000 | 500 |
| B16 | ບ້ານ ນາລອງ<br>ບ້ານ ນາອີດ(ຄຸ້ມນາພາ)<br>ບ້ານ ຊຽງຊື້<br>ບ້ານ ນາເມືອງ | - | - | 10.000 | 5.000 |
| B17 | ບ້ານ ເມືອງງາ | - | - | 10.000 | 5.000 |
| B18 | ບ້ານ ຈະຄຽນ | - | - | 2.500 | 800 |
| | ບ້ານ ບໍ່<br>ບ້ານ ດ່ານເຜົ້າ | | | | |

| | | | | | |
|---|---|---|---|---|---|
| B19 | ບ້ານ ແກ້ງພູນ<br>ບ້ານ ແຈຝາຍ<br>ບ້ານ ພຽງໄຊ<br>ບ້ານ ຟ້ອງຊ້າງ<br>ບ້ານ ພຽງເກີນ<br>ບ້ານ ພຽງໄຄ້<br>ບ້ານ ຟ້ອງງາ<br>ບ້ານ ນາເຮືອ<br>ບ້ານ ນາມັ້ນ<br>ບ້ານ ຫີນດຳ<br>ບ້ານ ນາຮາມ<br>ບ້ານ ຄຳນາງ | - | - | 2.500 | 800 |

3. ເມືອງ ຊຳໃຕ້ ລະຫັດ C ມີເຂດປະເມີນ (C1- C11).

| ລະຫັດເຂດ | ຊື່ບ້ານ (ລວມມີ 93 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງ ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| C1<br>ເຂດການຄ້າ, ເທດສະບານ | ບ້ານ ພັນສະຫວັນ<br>ບ້ານ ຖິ່ນ | 100.000 | 70.000 | 40.000 | 20.000 |
| C2<br>ເຂດອ້ອມຕົວ ເມືອງ | ບ້ານ ພັນສະຫວັນ<br>ບ້ານ ຖິ່ນ<br>ບ້ານ ເລົາ<br>ບ້ານ ຄໍ້<br>ບ້ານ ຊຳໃຕ້<br>ບ້ານ ສິບສ້ານ<br>ບ້ານ ຊຳທອງ | 60.000 | - | 15.000 | 5.000 |
| C3<br>ເຂດອ້ອມຕົວ ເມືອງ | ບ້ານ ຄໍ້<br>ບ້ານ ຊຳໃຕ້<br>ບ້ານ ພຽງໂຮມ | 30.000 | - | 8.000 | 3.000 |

| | | | | | |
|---|---|---|---|---|---|
| | ບ້ານ ຫ້ວຍກຶກ<br>ບ້ານ ສິບສ້ານ | | | | |
| C4 | ບ້ານ ພຽງດ້າຍ<br>ບ້ານ ສິບແກ້ມ<br>ບ້ານ ຜາທາດ<br>ບ້ານ ຕີນຜາ<br>ບ້ານ ນາອຶນ<br>ບ້ານ ອຶນ<br>ບ້ານ ນາງິ້ວ<br>ບ້ານ ສົມກາງ | 10.000 | - | 2.000 | 800 |
| C5 | ບ້ານ ພຽງຖິ່ນ<br>ບ້ານ ເມືອງຂົນ<br>ບ້ານ ນາມາດ<br>ບ້ານ ພຽງໃໝ່ | 20.000 | 8.000 | 4.000 | 1.500 |
| C6 | ບ້ານ ສິບເປົ້ງ<br>ບ້ານ ດ່ານ<br>ບ້ານ ຕີນພູ<br>ບ້ານ ຄາ<br>ບ້ານ ປຸ່ງບານ<br>ບ້ານ ຫ້ວຍສາລາ<br>ບ້ານ ຫົວນາ<br>ບ້ານ ນ້ຳແຕບ<br>ບ້ານ ນາເມືອງ<br>ບ້ານ ຈາອ່າຍ<br>ບ້ານ ຫ້ວຍກຸ່ມ<br>ບ້ານ ຫ້ວຍມີ<br>ບ້ານ ຫ້ວຍປຸ່ງ<br>ບ້ານ ຖ້ຳໜູ<br>ບ້ານ ປຸກ<br>ບ້ານ ຫົວຊຽງ<br>ບ້ານ ຫ້ວຍສະແຫຼບ<br>ບ້ານ ຍອດເຟືອງ<br>ບ້ານ ແກ້ງໃໝ່ | 5.000 | 2.500 | 1.500 | 500 |

| | | | | | |
|---|---|---|---|---|---|
| | ບ້ານ ນາໃຜ<br>ບ້ານ ໜອງແຮດ<br>ບ້ານ ໜອງໄຊ<br>ບ້ານ ສິບຕຽງ<br>ບ້ານ ແກ່ວດິ່ງ<br>ບ້ານ ທັບຄໍ້<br>ບ້ານ ປ່າເລົາ<br>ບ້ານ ພຽງໃໝ່<br>ບ້ານ ຊາຍຄູນ<br>ບ້ານ ບົກ<br>ບ້ານ ຊຽງບານ<br>ບ້ານ ຫ້ວຍໄຄ້<br>ບ້ານ ຫີນຕັ້ງ<br>ບ້ານ ຮົດ<br>ບ້ານ ຫ້ວຍມຸນ<br>ບ້ານ ຫົວດັງ | | | | |
| C7 | ບ້ານ ນາຫຼ້າ<br>ບ້ານ ຊຽງດີ<br>ບ້ານ ປອມຄໍ້<br>ບ້ານ ໂພນໄຊ<br>ບ້ານ ຫ້ວຍລາດ<br>ບ້ານ ນໍ້າອົ້ມ | 10.000 | - | 2.000 | 800 |
| C8 | ບ້ານ ເມືອງພັດ | 25.000 | - | 5.000 | 2.000 |
| C9 | ບ້ານ ເຕົ້າ<br>ບ້ານ ພຽງຄູນ<br>ບ້ານ ນາໄຊ<br>ບ້ານ ນາເກືອ<br>ບ້ານ ສິບແປນ<br>ບ້ານ ນໍ້າໄຕ<br>ບ້ານ ປ່າຂົມ<br>ບ້ານ ນໍ້າບົງ<br>ບ້ານ ປັກປຸກ | 25.000 | - | 3.000 | 1.000 |

| | | | | | |
|---|---|---|---|---|---|
| C10 | ບ້ານ ນາແຊວ<br>ບ້ານ ນາສີຄຳໄຊ<br>ບ້ານ ຖ້ຳຈິກ<br>ບ້ານ ຜາບົກແຊວ<br>ບ້ານ ຜາລ້ອມ<br>ບ້ານ ນາຮຽງ<br>ບ້ານ ຜາເຜີ້ງ<br>ບ້ານ ກໍລູ້<br>ບ້ານ ພູແລ | 8.000 | - | 1.500 | 1.000 |
| C11 | ບ້ານ ປາວເໜືອ<br>ບ້ານ ຜາໜອງບອນ<br>ບ້ານ ປາວໃຕ້<br>ບ້ານ ເມືອງກຽນ<br>ບ້ານ ນາແລ<br>ບ້ານ ດອກໄມ້<br>ບ້ານ ດ່ານ<br>ບ້ານ ພຽງເຜືອ<br>ບ້ານ ເຜືອເໜືອ<br>ບ້ານ ນາຕອກ<br>ບ້ານ ເມືອງເກີນ<br>ບ້ານ ຫາງ<br>ບ້ານ ໂພໄຊ<br>ບ້ານ ທ່າເຫຼົ້າ | 10.000 | - | 2.000 | 1.000 |

4. ເມືອງ ກ້ອນ ລະຫັດ D ມີເຂດປະເມີນ (D1- D13)

| ລະຫັດເຂດ | ຊື່ບ້ານ (ລວມມີ 71 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງ ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| D1 | ບ້ານ ເມືອງກວັນ | 80.000 | 60.000 | 30.000 | 15.000 |

| | | | | | |
|---|---|---|---|---|---|
| ເຂດການຄ້າ, ເທດສະບານ | | | | | |
| D2 | ບ້ານ ເມືອງກວັນ<br>ບ້ານ ຫ້ວຍອ້ງ | 70.000 | 50.000 | 20.000 | 5.000 |
| D3 ເຂດອ້ອມຕົວເມືອງ | ບ້ານ ເມືອງກວັນ<br>ບ້ານ ໜອງແຫວນ<br>ບ້ານ ນໍ້າຂວ້າງ | 40.000 | 15.000 | 5.000 | 2.000 |
| D4 ເຂດຂະຫຍາຍຕົວເມືອງ | ບ້ານ ເມືອງນາ<br>ບ້ານ ນາທອງ<br>ບ້ານ ລ້ອງກວ້າງ | - | 10.000 | 3.000 | 1.000 |
| D5 | ບ້ານ ນາໜັງ<br>ບ້ານ ຜາແຫຼມ | 15.000 | - | 5.000 | 2.000 |
| D6 | ບ້ານ ຫີນຕັ້ງ<br>ບ້ານ ກໍໄຮ<br>ບ້ານ ຫົວນາ<br>ບ້ານ ຫີນເງິບ<br>ບ້ານ ຍອດບໍ່<br>ບ້ານ ບິດຊ້າຍ<br>ບ້ານ ນໍ້າປາດ<br>ບ້ານ ປ່າຂົມ<br>ບ້ານ ຫ້ວຍຈີນ<br>ບ້ານ ບອກ<br>ບ້ານ ກໍຟຸງ | - | - | 2.000 | 400 |
| D7 | ບ້ານ ກໍຄາຍ<br>ບ້ານ ຫ້ວຍເຮັ້ງ<br>ບ້ານ ທ່າຄວາຍ<br>ບ້ານ ສຸມລວງ<br>ບ້ານ ຍອດອຶ້ນ<br>ບ້ານ ສົມຄູນ<br>ບ້ານ ຍອດປາວ | - | 2.000 | 1.000 | 200 |
| D8 | ບ້ານ ຫ້ວຍມ່ວງ<br>ບ້ານ ນາງອມ | - | 3.000 | 1.500 | 300 |

| | | | | | |
|---|---|---|---|---|---|
| | ບ້ານ ນາອົ້ນ<br>ບ້ານ ນາອໍ້ | | | | |
| D9 | ບ້ານ ຫ້ວຍຊາຍ<br>ບ້ານ ປ່າກ່າ<br>ບ້ານ ເມືອງເຟືອງ<br>ບ້ານ ຫ້ວຍແຮ້<br>ບ້ານ ຫ້ວຍຫິງ<br>ບ້ານ ຫ້ວຍທາ<br>ບ້ານ ຖໍ້າເຂືອງ<br>ບ້ານ ຫ້ວຍມາຍ<br>ບ້ານ ພຽງມອນ<br>ບ້ານ ພຽງດີ<br>ບ້ານ ພຽງໂພ<br>ບ້ານ ສົນໂຮມ<br>ບ້ານ ສິບກັງ<br>ບ້ານ ພຽງຊາງ<br>ບ້ານ ສິບສານ<br>ບ້ານ ແກງກໍ້<br>ບ້ານ ພຽງທາດ<br>ບ້ານ ນາໂຮມ | - | 1.500 | 800 | 200 |
| D10 | ບ້ານ ປ່າຂີມ<br>ບ້ານ ຫ້ວຍເປີ້ຍ<br>ບ້ານ ຫ້ວຍງິວ<br>ບ້ານ ປຸ່ງກ່າ<br>ບ້ານ ປຸ່ງຫວາຍ<br>ບ້ານ ຜາແດງ<br>ບ້ານ ນາກໍມື<br>ບ້ານ ຫ້ວຍປຸ່ງ<br>ບ້ານ ແກ່ອກຸດ<br>ບ້ານ ຕົ້ງເສົ້າ | - | 2.000 | 1.000 | 300 |
| | ບ້ານ ໜອງເລົາ<br>ບ້ານ ປຸ່ງສ້ຽງ<br>ບ້ານ ຫ້ວຍສະມັດ | | | | |

| | | | | | |
|---|---|---|---|---|---|
| D11 | ບ້ານ ຫ້ວຍອານ<br>ບ້ານ ຕົ່ງອູ່<br>ບ້ານ ແດນດິນ<br>ບ້ານ ປຸ່ງຖາກ<br>ບ້ານ ຫ້ວຍໄຮ<br>ບ້ານ ດອນ<br>ບ້ານ ພົນທອງ<br>ບ້ານ ມ້າ<br>ບ້ານ ນາໜ້ຽງ | 3.000 | 1.500 | 800 | 200 |

5. ເມືອງ ສິບເບົາ ລະຫັດ E ມີເຂດປະເມີນ ( E1- E22 ).

| ລະຫັດເຂດ | ຊື່ບ້ານ (ລວມມີ 67 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| E1 | ບ້ານ ສິບເບົາ | 180.000 | 120.000 | 50.000 | 15.000 |
| E1.1 | ບ້ານ ສິບເບົາ | - | 50.000 | 15.000 | 8.000 |
| E2 | ບ້ານ ພຽງໄຊ | 80.000 | - | 12.000 | 5.000 |
| E3 | ບ້ານ ເມືອງຮິມ | 80.000 | - | 12.000 | 5.000 |
| E4 | ບ້ານ ຫາດສ້ານ<br>ບ້ານ ພຽງເຟືອງ | 60.000 | - | 8.000 | 3.000 |
| E5 | ບ້ານ ເມືອງຮັງ<br>ບ້ານ ຕະລາງ | 70.000 | - | 10.000 | 3.000 |
| E6 | ບ້ານ ນາງິວ<br>ບ້ານ ວຽງຮັງ<br>ບ້ານ ຮາວແສນ<br>ບ້ານ ນາພານ | 40.000 | - | 7.000 | 2.000 |
| E7 | ບ້ານ ສິບຮາວ | 100.000 | 50.000 | 15.000 | 5.000 |

| | | | | | |
|---|---|---|---|---|---|
| E8 | ບ້ານ ກາງຣາວ<br>ບ້ານ ນາໂພນສຸກ<br>ບ້ານ ນາຊາງ<br>ບ້ານ ໂພນຊາຍ<br>ບ້ານ ນາຍົມ | 50.000 | - | 10.000 | 3.000 |
| E9 | ບ້ານ ນາອອນ<br>ບ້ານ ສົມຫວັງ | - | 20.000 | 7.000 | 2.000 |
| E10 | ບ້ານ ຫ້ວຍຕຸງ<br>ບ້ານ ນ້ຳແຫ້ງ<br>ບ້ານ ນາຄຳຮົງ<br>ບ້ານ ຕາດ | 20.000 | - | 2.000 | 800 |
| E11 | ບ້ານ ນາຄູນ<br>ບ້ານ ດ່ານຮົງ<br>ບ້ານ ນາໃໝ່<br>ບ້ານ ຄັງກາດ<br>ບ້ານ ໂພນຮົງ | - | - | 3.000 | 1.000 |
| E12 | ບ້ານ ປຸ່ງຮົມ<br>ບ້ານ ລ້ອງຮົມ<br>ບ້ານ ໂບ້<br>ບ້ານ ບອນ<br>ບ້ານ ດ່ານຮົມ | - | - | 2.500 | 800 |
| E13 | ບ້ານ ນາສົ້ມ<br>ບ້ານ ລ້ອງເງິນ<br>ບ້ານ ນາປ່ານ<br>ບ້ານ ກາງລ້ອງ<br>ບ້ານ ຄອນສີ<br>ບ້ານ ສີບຸນເຮືອງ<br>ບ້ານ ກອ້ງຄູນ | - | 10.000 | 3.000 | 1.000 |
| E14 | ບ້ານ ນາໂຮມ<br>ບ້ານ ນ້ຳບົງ<br>ບ້ານ ນາໂງ່ນ | - | - | 2.000 | 800 |

| | | | | | |
|---|---|---|---|---|---|
| E15 | ບ້ານ ນາ<br>ບ້ານ ຫ້ວຍເງິນ<br>ບ້ານ ຫ້ວຍປາ | - | - | 2.000 | 800 |
| E16 | ບ້ານ ຜີ້ງເບົາ<br>ບ້ານ ນາປົງ<br>ບ້ານ ປ້ອງ<br>ບ້ານ ປ່າຂີມໃຫຍ່ | - | 10.000 | 3.000 | 1.000 |
| E17 | ບ້ານ ປ່າຂີມນ້ອຍ<br>ບ້ານ ລ້ອງຕອງ<br>ບ້ານ ນ້ຳເຕີບ<br>ບ້ານ ຜາລ້ອງ | - | 12.000 | 4.000 | 1.500 |
| E18 | ບ້ານ ປ່າຮ່າງ | - | 80.000 | 15.000 | 5.000 |
| E19 | ບ້ານ ນາເສື້ອ<br>ບ້ານ ປ່າຂີມເປັດ<br>ບ້ານ ປົງ<br>ບ້ານ ເມືອງດົງ<br>ບ້ານ ພຽງແງ | - | - | 3.000 | 1.000 |
| E20 | ບ້ານ ມ່ວງ<br>ບ້ານ ຫ້ວຍຮຽງ | - | - | 4.000 | 1.500 |
| E21 | ບ້ານ ນາຄຳຮາວ<br>ບ້ານ ນາຊອນ<br>ບ້ານ ນາພຽງ | - | - | 7.000 | 2.500 |
| E22 | ບ້ານ ນາກາ<br>ບ້ານ ໂພນໄຊ | - | - | 3.000 | 1.000 |

6. ເມືອງ ຊຽງຄໍ້ ລະຫັດ F ມີເຂດປະເມີນ (F1- F17).

| ລະຫັດເຂດ | ຊື່ບ້ານ (ລວມມີ 59 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| F1 | ບ້ານ ຊຽງຄໍ້ | 120.000 | 50.000 | 15.000 | 5.000 |

| | | | | | |
|---|---|---|---|---|---|
| F2 | ບ້ານ ນາຍົມ<br>ບ້ານ ສົບມອນ<br>ບ້ານ ຕະອອນໃຕ້ | 80.000 | 15.000 | 8.000 | 3.000 |
| F3 | ບ້ານ ພຽງຍ່ຳ<br>ບ້ານ ນາຂາມ<br>ບ້ານ ສົບໂກຍ<br>ບ້ານ ໂພນທອງ | 60.000 | - | 8.000 | 3.000 |
| F4 | ບ້ານ ສົບຊາຍ<br>ບ້ານ ສົບລ້ອງ | 80.000 | 15.000 | 8.000 | 3.000 |
| F5 | ບ້ານ ນາວຽງ<br>ບ້ານ ນາເຮື້ອ<br>ບ້ານ ກິກໄຊ<br>ບ້ານ ຫົວນາ | - | - | 5.000 | 2.000 |
| F6 | ບ້ານ ຫ້ວຍມອນ<br>ບ້ານ ກົງຄຳ<br>ບ້ານ ໜອງກ້ຽງ<br>ບ້ານ ງອມ<br>ບ້ານ ໂພນນາ | - | 10.000 | 5.000 | 2.000 |
| F7 | ບ້ານ ຮົບ<br>ບ້ານ ແສ້<br>ບ້ານ ບາວ | 60.000 | 10.000 | 8.000 | 3.000 |
| F8 | ບ້ານ ສົບສານ<br>ບ້ານ ພຽງໂຮມB | 100.000 | 10.000 | 8.000 | 3.000 |
| F9 | ບ້ານ ລຸບ<br>ບ້ານ ຖຸນຄຳ | - | - | 5.000 | 2.000 |
| F10 | ບ້ານ ນາຕອງ<br>ບ້ານ ນາໜອງ<br>ບ້ານ ຊຽງແດນ<br>ບ້ານ ຜຸກ | - | 6.000 | 3.000 | 1.500 |
| F11 | ບ້ານ ສົບດຸງ<br>ບ້ານ ພຽງຊາງ<br>ບ້ານ ນາເດື່ອ | - | 5.000 | 2.000 | 800 |

| | | | | | |
|---|---|---|---|---|---|
| | ບ້ານ ແທ່ນສານ<br>ບ້ານ ສິບປົ້ນ | | | | |
| F12 | ບ້ານ ຫ້ວຍລາງ<br>ບ້ານ ສິບລົ້ມ | - | 8.000 | 2.000 | 1.000 |
| F13 | ບ້ານ ແກ່ວແວ່ນ<br>ບ້ານ ຜາເອົ່າ<br>ບ້ານ ກໍໄຮ<br>ບ້ານ ແກ່ວລີມ<br>ບ້ານ ນາຄ້າງ<br>ບ້ານ ພຽງສາ | - | 6.000 | 2.500 | 1.200 |
| F14 | ບ້ານ ຫ້ວຍປີດ<br>ບ້ານ ພຽງໂຮມ A<br>ບ້ານ ສິບຜ່ອງ<br>ບ້ານ ແຈຝາຍ<br>ບ້ານ ດິນແດງ<br>ບ້ານ ສິບເປຍ<br>ບ້ານ ປຸ່ງແສດ<br>ບ້ານ ທະລາດ<br>ບ້ານ ຜາລ້ອງ | - | - | 2.000 | 1.000 |
| F15 | ບ້ານ ຫີວພູ<br>ບ້ານ ມອງນໍ້າ | - | 6.000 | 2.500 | 1.200 |
| F16 | ບ້ານ ຜົ້ງຊາຍ<br>ບ້ານ ວັງຕັ້ງ<br>ບ້ານ ມ່ວງ<br>ບ້ານ ໜອງຄໍາ | - | 8.000 | 3.500 | 1.500 |
| F17 | ບ້ານ ປ່າຂີມ | - | - | 2.000 | 1.000 |

7. ເມືອງ ແອດ ລະຫັດ G ມີເຂດປະເມີນ ( G1-G16 ).

| ລະຫັດເຂດ | ຊື່ບ້ານ (ລວມມີ 77 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຊ່ອມ | ທາງດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| G1 (ເຂດໃຈກາງ ເມືອງ ເປັນເຂດ ການຄ້າ) | ບ້ານ ເມືອງ ແອດ<br>ບ້ານ ນາຮ້າ | 150.000 | 110.000 | 80.000 | 30.000 |
| G2 (ເຂດໃຈກາງ ເມືອງ ເປັນເຂດ ທີ່ຢູ່ອາໄສ) | ບ້ານ ໂຊດ<br>ບ້ານ ນາແລງ<br>ບ້ານ ເມືອງວັ້ນ<br>ບ້ານ ນາຮີດ<br>ບ້ານ ພຽງເງິນ | 100.000 | - | 40.000 | 20.000 |
| G3 (ເຂດອ້ອມໃຈກາງ ເມືອງ) | ບ້ານ ຊຽງຄູນ<br>ບ້ານ ນາປາ<br>ບ້ານ ແຜ້<br>ບ້ານ ພຽງລຸ້<br>ບ້ານ ລຸ້ | 100.000 | 50.000 | 20.000 | 8.000 |
| G4 | ບ້ານ ເປັຍ<br>ບ້ານ ຫາດກຸ້<br>ບ້ານ ດ່ານ<br>ບ້ານ ແທ່ນລວງ | 80.000 | 30.000 | 10.000 | 4.000 |
| G5 | ບ້ານ ຫ້ວຍກຸ້ | - | - | 8.000 | 3.000 |
| G6 | ບ້ານ ພຽງຢາງ<br>ບ້ານ ນາຄໍາ<br>ບ້ານ ພັກແຟນ | - | 30.000 | 6.000 | 2.000 |
| G7 | ບ້ານ ນາງິ້ວ<br>ບ້ານ ຜາແກ້ວ<br>ບ້ານ ຫ້ວຍກອກ | - | 15.000 | 3.000 | 1.000 |

| | | | | | |
|---|---|---|---|---|---|
| G8 | ບ້ານ ກາງຫວ້ຍຢອງ<br>ບ້ານ ຫ້ວຍຢອງ<br>ບ້ານ ນາສ້ານ<br>ບ້ານ ຫ້ວຍຫຼົ່ມ | - | - | 4.000 | 1.500 |
| G9 | ບ້ານ ກາງນ້ຳແອດ<br>ບ້ານ ນາແມນ<br>ບ້ານ ລ້ອງຫອຍ<br>ບ້ານ ບອມໂພ<br>ບ້ານ ດ້າຍ<br>ບ້ານ ນາໂຮມ<br>ບ້ານ ນາ | - | - | 4.000 | 1.500 |
| G10 | ບ້ານ ນາໂຮງ<br>ບ້ານ ລ້ອງສິນ<br>ບ້ານ ປ່າໝໍ່<br>ບ້ານ ຜາປູນ | - | - | 2.000 | 500 |
| G11 | ບ້ານ ຜາແດງ<br>ບ້ານ ສິບແອກ<br>ບ້ານ ກະຕັນ<br>ບ້ານ ຫ້ວຍປອກ<br>ບ້ານ ເມືອງຊຶມ<br>ບ້ານ ຫ້ວຍໝໍ້<br>ບ້ານ ຫ້ວຍແອກ<br>ບ້ານ ຕະໂມ<br>ບ້ານ ຫ້ວຍຝອກ<br>ບ້ານ ນາຈາປອງ<br>ບ້ານ ລ້ອງແກ້ວ | - | - | 1.000 | 200 |

| | | | | | |
|---|---|---|---|---|---|
| G12 | ບ້ານ ຖ້ຳຊ່ອງ<br>ບ້ານ ນາພຽງ<br>ບ້ານ ນາປຸງ<br>ບ້ານ ນາຂາມ<br>ບ້ານ ວັງໂປງ<br>ບ້ານ ນາຂວາງ<br>ບ້ານ ນາສານ | - | - | 2.500 | 800 |
| G13 | ບ້ານ ແກ່ວແຮ່<br>ບ້ານ ສໍ<br>ບ້ານ ຫີນຖູນ<br>ບ້ານ ແຈຝາຍ<br>ບ້ານ ນາມາດ | - | 30.000 | 5.000 | 2.000 |
| G14 | ບ້ານ ນາເກືອເໜືອ<br>ບ້ານ ນາເກືອໃຕ້<br>ບ້ານ ຜາເທິບ<br>ບ້ານ ປ່າຄາ<br>ບ້ານ ກາລັງ<br>ບ້ານ ແກ່ວກູ້ | - | - | 3.000 | 1.000 |
| G15 | ບ້ານ ນາຣີ<br>ບ້ານ ນາຍິມ<br>ບ້ານ ນາໄກ່ | - | 15.000 | 3.000 | 1.500 |
| G16 | ບ້ານ ນາຫອຍ<br>ບ້ານ ນາແງ<br>ບ້ານ ກາງ<br>ບ້ານ ຫ້ອຍເໝັ້ນ<br>ບ້ານ ເໝັ້ນ<br>ບ້ານ ນາເຊົ້າ<br>ບ້ານ ຫ້ອຍຊາຍ | - | 8.000 | 2.000 | 1.000 |

8. ເມືອງ ຫົວເມືອງ ລະຫັດ H ມີເຂດປະເມີນ ( H1-H14 ).

| ລະຫັດເຂດ | ຊື່ບ້ານ (ລວມມີ 78 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| H1 ເຂດການຄ້າ | ບ້ານ ບອມງາມ | 60.000 | 30.000 | 10.000 | 5.000 |
| H2 ເຂດອ້ອມຕົວເມືອງ | ບ້ານ ບອມງາມ<br>ບ້ານ ເມືອງເປີນ<br>ບ້ານ ຄ້ອງ | 40.000 | 20.000 | 8.000 | 4.000 |
| H3 | ບ້ານ ແອກ<br>ບ້ານ ພ້າວ | 15.000 | 5.000 | 3.000 | 800 |
| H4 | ບ້ານ ນາເກັ່ງ<br>ບ້ານ ນາສາມ<br>ບ້ານ ປ່າແປກ | 10.000 | - | 2.000 | 500 |
| H5 | ບ້ານ ນ້ຳປ້ອງ<br>ບ້ານ ຫົວຊຽງ | - | 10.000 | 3.000 | 800 |
| H6 | ບ້ານ ຜານາງ<br>ບ້ານ ລ້ອງອົ່ງ<br>ບ້ານ ເຕົາຫີນ<br>ບ້ານ ຄັ້ງຄາວ | 10.000 | 5.000 | 2.000 | 500 |
| H7 | ບ້ານ ຫ້ວຍມຸ້ນ<br>ບ້ານ ກາງ<br>ບ້ານ ແກ່ວຊຶກ<br>ບ້ານ ໂຮງອ້ອຍ<br>ບ້ານ ຫ້ວຍຫຸ້<br>ບ້ານ ຜັກຫຍ້າ<br>ບ້ານ ພຽງໄຊ<br>ບ້ານ ເມືອງອໍ້ | 6.000 | - | 1.500 | 300 |
| H8 | ບ້ານ ກໍ້ຮົ້ງ | | | | |

| | | | | | |
|---|---|---|---|---|---|
| | ບ້ານ ສົ້ນຂິວ<br>ບ້ານ ພຽງດີ<br>ບ້ານ ໝໍ້<br>ບ້ານ ສິບລາບ<br>ບ້ານ ໂຮມພັນ<br>ບ້ານ ໂຮມທອງ<br>ບ້ານ ນ້ຳຕິບ | 10.000 | - | 2.000 | 500 |
| H9 | ບ້ານ ສິບເລົ້າ<br>ບ້ານ ນ້ຳນາດ | 20.000 | 10.000 | 3.000 | 800 |
| H10 | ບ້ານ ຫາດໄກ້<br>ບ້ານ ຫ້ວຍໃໝ່<br>ບ້ານ ນິກແອ່ນ<br>ບ້ານ ໂຮມຊາຍ<br>ບ້ານ ນາເມືອງ<br>ບ້ານ ນາແລ້ງ<br>ບ້ານ ຍອດອາດ<br>ບ້ານ ດົງ<br>ບ້ານ ຫ້ວຍໄຄ້ | - | 3.500 | 1.500 | 300 |
| H11 | ບ້ານ ປ່າຈ້າ<br>ບ້ານ ກໍໄຮ<br>ບ້ານ ໂພນດົງ<br>ບ້ານ ປາຄາເໜືອ<br>ບ້ານ ປາຄາໃຕ້ | - | 3.000 | 1.200 | 200 |
| H12 | ບ້ານ ລານຊຽງ | - | 5.000 | 1.800 | 500 |
| H13 | ບ້ານ ຕາດໄກ່<br>ບ້ານ ສຸມຫວານ<br>ບ້ານ ຫ້ວຍຊຸ້ມ<br>ບ້ານ ມີນ<br>ບ້ານ ປ່າຊອດ<br>ບ້ານ ໂດນ<br>ບ້ານ ສາມຫ້ວຍ<br>ບ້ານ ສະລອງ | | | | |

| | | | | | |
|---|---|---|---|---|---|
| | ບ້ານ ສະເລີດ<br>ບ້ານ ປ່າຈ້າ<br>ບ້ານ ຜາສີວ<br>ບ້ານ ພຽງໂຮມ<br>ບ້ານ ບໍ່<br>ບ້ານ ພຽງຊ້າງ<br>ບ້ານ ຖ້ຳລອດ<br>ບ້ານ ຮິມກອງ<br>ບ້ານ ຫາດ<br>ບ້ານ ຕະນຽດ<br>ບ້ານ ບອກເໜືອ<br>ບ້ານ ບອກໃຕ້<br>ບ້ານ ຖ້ຳ<br>ບ້ານ ຫາດຜາຕັ້ງ | - | - | 1.000 | 200 |
| H14 | ບ້ານ ນ້ຳແລມ<br>ບ້ານ ສິງຄາວ<br>ບ້ານ ລ້ອງ<br>ບ້ານ ນາງົ້ວ<br>ບ້ານ ອຸໄທ<br>ບ້ານ ສະໜອດ<br>ບ້ານ ນາໝູ<br>ບ້ານ ປ່າ<br>ບ້ານ ກໍພຸກ | - | - | 1.200 | 200 |

9. ເມືອງ ຮ້ຽມ ລະຫັດ I ມີເຂດປະເມີນ ( I1-I13 ).

| ລະຫັດເຂດ | ຊື່ບ້ານ<br>(ລວມມີ 35 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ<br>ສາຍຫຼັກ | ທາງ<br>ສາຍເຊື່ອມຕໍ່ | ທາງສາຍແຈກ/<br>ຮ່ອມ | ທາງ<br>ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| I1 | ບ້ານ ຫາດຮ້ຽມ<br>ບ້ານ ເມືອງຮ້ຽມ | 80.000 | 50.000 | 30.000 | 20.000 |

| | | | | | |
|---|---|---|---|---|---|
| ເຂດການຄ້າ ເທດສະບານ | ບ້ານ ນາທອນ | | | | |
| l2<br>ເຂດອ້ອມຕົວ ເມືອງ | ບ້ານ ສຳພັນທອງ<br>ບ້ານ ເມືອງຮ້ຽມ | 70.000 | - | 20.000 | 10.000 |
| l3<br>ເຂດຂະຫຍາຍຕົວ ເມືອງ | ບ້ານ ນາທອນ<br>ບ້ານ ນາວຽງ<br>ບ້ານ ຫ້ວຍສາ<br>ບ້ານ ຫາດຮ້ຽມ<br>ບ້ານ ເມືອງຮ້ຽມ | 60.000 | 40.000 | 20.000 | 6.000 |
| l4 | ບ້ານ ແທ່ນຮິ້ງ<br>ບ້ານ ວຽງທອງ<br>ບ້ານ ປຸ່ງໄຮ່<br>ບ້ານ ໂຄ້ງ | - | 30.000 | 10.000 | 3.000 |
| l5 | ບ້ານ ກໍກ້ຽງ<br>ບ້ານ ກາງ<br>ບ້ານ ປຸ່ງປິ່ນ<br>ບ້ານ ພູຫຼວງ | - | 15.000 | 6.000 | 2.000 |
| l6 | ບ້ານ ໂພນຄຳ<br>ບ້ານ ພຽງດີ<br>ບ້ານ ນາແລ | - | 8.000 | 4.000 | 1.000 |
| l7 | ບ້ານ ຄອນງິ້ວ<br>ບ້ານ ສີບມານ<br>ບ້ານ ພັນລໍ<br>ບ້ານ ພູດ່ານ | - | 6.000 | 3.000 | 1.000 |
| l8 | ບ້ານ ຖ້ຳລາເໜືອ<br>ບ້ານ ຖ້ຳລາໃຕ້<br>ບ້ານ ນາກູດ | - | 10.000 | 5.000 | 1.500 |
| l9 | ບ້ານ ພູວຽງ<br>ບ້ານ ນາປອກ<br>ບ້ານ ພຽງໂດນ | 8.000 | - | 2.000 | 500 |
| l10 | ບ້ານ ນາໂພນ | 30.000 | - | 10.000 | 4.000 |

| | | | | | |
|---|---|---|---|---|---|
| I11 | ບ້ານ ນ້ຳສາດ | 10.000 | - | 2.000 | 500 |
| I12 | ບ້ານ ຫົວພູ<br>ບ້ານ ໂພນສະອາດ<br>ບ້ານ ນ້ຳປຸ໋ງ | 8.000 | - | 1.500 | 500 |
| I13 | ບ້ານ ດອນຄູນ<br>ບ້ານ ສາກົກ<br>ບ້ານ ຫາດສາ | 6.000 | - | 1.000 | 300 |

10. ເມືອງ ຊ່ອນ ລະຫັດ J ມີເຂດປະເມີນ (J1-J12 ).

| ລະຫັດເຂດ | ຊື່ບ້ານ (ລວມມີ 34 ບ້ານ) | ລາຄາທີ່ດິນໃນແຕ່ລະເຂດ (ກີບ/ຕາແມັດ) | | | |
|---|---|---|---|---|---|
| | | ທາງ ສາຍຫຼັກ | ທາງ ສາຍເຊື່ອມຕໍ່ | ທາງສາຍແຈກ/ ຮ່ອມ | ທາງ ດັ້ງເດີມ |
| (1) | (2) | (3) | (4) | (5) | (6) |
| J1 ເຂດການຄ້າ ເທດສະບານ | ບ້ານ ຊ່ອນເໜືອ<br>ບ້ານ ນາໝໍ້<br>ບ້ານ ຫ້ວຍເໝືອຍ | 70.000 | 60.000 | 40.000 | 15.000 |
| J2 ເຂດອ້ອມຕົວ ເມືອງ | ບ້ານ ນາໝໍ້<br>ບ້ານ ຊ່ອນໃຕ້<br>ບ້ານ ຫ້ວຍເໝືອຍ | 60.000 | 40.000 | 30.000 | 10.000 |
| J3 ເຂດຂະຫຍາຍຕົວ ເມືອງ | ບ້ານ ຊ່ອນໃຕ້<br>ບ້ານ ຊາຍ<br>ບ້ານ ນາໝໍ້ | 40.000 | 30.000 | 6.000 | 2.000 |
| J4 | ບ້ານ ຊ່ອນເໜືອ<br>ບ້ານ ນາທົ່ງປໍ<br>ບ້ານ ນາໜີມ<br>ບ້ານ ບວກ<br>ບ້ານ ຫ້ວຍເໝືອຍ<br>ບ້ານ ນ້ຳງາວ | 40.000 | 25.000 | 10.000 | 3.000 |
| J5 | ບ້ານ ວັດ<br>ບ້ານ ຫາດ<br>ບ້ານ ແລ້ງ | 20.000 | - | 4.000 | 1.000 |

| | | | | | |
|---|---|---|---|---|---|
| J6 | ບ້ານ ໂພນຊອງ<br>ບ້ານ ຫ້ວຍຕືນ<br>ບ້ານ ບວມຝາດ<br>ບ້ານ ນ້ຳເນີນ<br>ບ້ານ ລ້ອງງົວປ່າ | 10.000 | - | 2.000 | 800 |
| J7 | ບ້ານ ມົ້ນ<br>ບ້ານ ນາຈັກ | - | 10.000 | 3.000 | 800 |
| J8 | ບ້ານ ໜອງໃສ<br>ບ້ານ ຫ້ວຍເລົາ<br>ບ້ານ ວັງຄວ້າງ<br>ບ້ານ ສາມສູມ<br>ບ້ານ ຫ້ວຍຍາມ<br>ບ້ານ ຫ້ວຍສູ້<br>ບ້ານ ບີງ<br>ບ້ານ ວັງແຟນ | 10.000 | - | 2.000 | 300 |
| J9 | ບ້ານ ເມືອງເກົ່າ<br>ບ້ານ ເມືອງເປີ້ | 15.000 | - | 8.000 | 2.000 |
| J10 | ບ້ານ ສົບຕື້ວ<br>ບ້ານ ນາກຽນ | 10.000 | - | 3.000 | 1.000 |
| J11 | ບ້ານ ໂງ່ນ<br>ບ້ານ ບໍ່ | - | - | 5.000 | 3.000 |
| J12 | ບ້ານ ຫ້ວຍສະໜອນ | - | - | 3.000 | 1.000 |

**ມາດຕາ 8 ຮູບແບບການປະເມີນລາຄາທີ່ດິນ**

ການປະເມີນລາຄາທີ່ດິນມີ 2 ຮູບແບບຄື:

1. ການປະເມີນລາຄາທີ່ດິນ ແບບສຸດຄິດໄລ່ ( ແບບວົງກວ້າງ ).
2. ການປະເມີນລາຄາທີ່ດິນ ແບບສະເພາະ.

**ມາດຕາ 9 ການປະເມີນລາຄາທີ່ດິນ ແບບສຸດຄິດໄລ່**

ການປະເມີນລາຄາທີ່ດິນແບບສຸດຄິດໄລ່ ແມ່ນຄິດໄລ່ຕາມເນື້ອທີ່ດິນ ຄູນກັບລາຄາທີ່ໄດ້ກຳນົດໃນແຕ່ລະເຂດຕາມຂໍ້ຕົກລົງສະບັບນີ້;

ການຄິດໄລ່ຄ່າທຳນຽມຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ.

ມາດຕາ 10 ການປະເມີນລາຄາທີ່ດິນແບບສະເພາະ.

ການປະເມີນລາຄາທີ່ດິນແບບສະເພາະ ແມ່ນການປະເມີນລາຄາທີ່ດິນ ທີ່ຕ້ອງການນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງທີ່ມີການແຕ່ງຕັ້ງຄະນະກຳມະການຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມໃນການປະເມີນ ແລະ ມີວິທີການປະເມີນລາຄາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ມາດຕາ 11 ການເກັບຮັກສາເອກະສານການປະເມີນລາຄາທີ່ດິນ

ຫຼັງຈາກໄດ້ດຳເນີນການປະເມີນລາຄາທີ່ດິນແລ້ວ ຂະແໜງທີ່ດິນຕ້ອງເກັບຮັກສາເອກະສານກ່ຽວກັບຄຳຮ້ອງຂໍຈົດທະບຽນ, ຂໍ້ມູນພາກສະໜາມ (ແບບພິມ ຈ), ຂໍ້ມູນການຄິດໄລ່ປະເມີນລາຄາ, ບົດລາຍງານຂອງພະນັກງານປະເມີນລາຄາ ແລະ ເອກະສານອື່ນໆ ທີ່ພົວພັນເຖິງລາຄາທີ່ດິນ ແລະ ສິ່ງປຸກສ້າງ ເຂົ້າໄວ້ຢູ່ໃນສຳນວນເອກະສານຕອນດິນ ແລະ ລະບົບການຄຸ້ມຄອງ;

ສຳລັບການນຳໃຊ້ລະບົບຄອມພິວເຕີເຂົ້າໃນການເກັບກຳຂໍ້ມູນກ່ຽວກັບການປະເມີນລາຄາທີ່ດິນຂະແໜງທີ່ດິນ ຕ້ອງຮັບປະກັນການເກັບຮັກສາ ແລະ ສຳເນົາຂໍ້ມູນເປັນປະຈຳ

## ໝວດທີ III
## ຂໍ້ຫ້າມ

ມາດຕາ 12 ຂໍ້ຫ້າມສຳລັບພະນັກງານການປະເມີນລາຄາທີ່ດິນ

ພະນັກງານປະເມີນລາຄາທີ່ດິນທຸກຂັ້ນຫ້າມມີພຶດຕິກຳ ຫຼື ການກະທຳ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງລັດ ດັ່ງນີ້:

1. ສວຍໃຊ້ອຳນາດໜ້າທີ່, ຕຳແໜ່ງ, ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ ຫຼື ຖ່ວງດຶງການຄົ້ນຄວ້າເອກະສານ, ທວງເອົາ, ຂໍເອົາ ແລະ ຮັບສິນບົນ ຈາກເຈົ້າຂອງສິດນຳໃຊ້ທີ່ດິນ, ເຈົ້າຂອງໂຄງການ ແລະ ກິດ ຈະການຕ່າງໆ ກ່ຽວກັບທີ່ດິນ ຊຶ່ງເປັນການລະເມີດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້;

2. ສົມຮູ້ຮ່ວມຄິດໃນການລັກໂລບ ຫຼື ສໍ້ໂກງ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຕໍ່ການເຄື່ອນໄຫວວຽກງານການປະເມີນລາຄາທີ່ດິນ;

3. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

ມາດຕາ 13 ຂໍ້ຫ້າມສຳລັບເຈົ້າຂອງສິດນຳໃຊ້ທີ່ດິນ ແລະ ບຸກຄົນອື່ນ

ເຈົ້າຂອງສິດນຳໃຊ້ທີ່ດິນ ຫຼື ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ມີພຶດຕິກຳ ຫຼື ການກະທຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງລັດ ດັ່ງນີ້:

1. ປົກປິດ, ເຊື່ອງອຳ, ບໍ່ຈິງໃຈໃນການແຈ້ງຂໍ້ມູນ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງ, ນາບຂູ່ພະນັກງານທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

2. ໃຫ້ສິນບົນ, ສົມຮູ້ຮ່ວມຄິດ ກັບພະນັກງານການປະເມີນລາຄາທີ່ດິນ ປອມແປງ, ແຈ້ງ ຫຼື ສ້າງຂໍ້ມູນເທັດສະໜອງຂໍ້ມູນອັນບໍ່ຖືກຕ້ອງຕາມຄວາມຈິງ ເພື່ອອຳນວຍຄວາມສະດວກ ແລະ ຫາຜົນປະໂຫຍດແກ່ຕົນຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

3. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ການຄຸ້ມຄອງ ແລະ ຕິດຕາມກວດກາ
## ວຽກງານປະເມີນລາຄາທີ່ດິນ

**ມາດຕາ 14 ອົງການຄຸ້ມຄອງວຽກງານການປະເມີນລາຄາທີ່ດິນ**

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫົວພັນ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ 10 ເມືອງ;
3. ອົງການປົກຄອງບ້ານ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ**

ໃນວຽກງານການປະເມີນລາຄາທີ່ດິນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງມີ ສິດ ແລະ ໜ້າ ທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ອົງການປົກຄອງແຂວງ ໃນການຄົ້ນຄ້ວາ, ປະເມີນ ແລະ ປັບປຸງລາຄາທີ່ດິນ ໃນທົ່ວແຂວງ ໂດຍປະສານສົມທົບກັບພະແນກການອື່ນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານທີ່ ກ່ຽວຂ້ອງ ແລ້ວສະເໜີເຈົ້າແຂວງ ພິຈາລະນານຳສະເໜີໃຫ້ສະພາປະຊາຊົນແຂວງ ຮັບຮອງເອົາຕາມກົດໝາຍ;

2. ສ້າງແຜນທີ່ເຂດປະເມີນລາຄາທີ່ດິນ ໃນທົ່ວແຂວງ ແລະ ເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທຸກພາກ ສ່ວນໃນສັງຄົມ ໄດ້ຮັບຊາບ ແລະ ປະຕິບັດ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ອົງການປົກຄອງເມືອງໃນການຈັດ ຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

4. ຊີ້ນຳ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດການຄິດໄລ່ ແລະ ການເກັບຄ່າທຳນຽມ, ອາກອນ ລາຍໄດ້ຈາກທີ່ດິນ ແລະ ຄ່າທັບສິດນຳໃຊ້ທີ່ດິນ ຕາມຂໍ້ຕົກລົງສະບັບນີ້;

5. ເກັບກຳຂໍ້ມູນສະຖິຕິການເກັບຄ່າທຳນຽມການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ການເສຍອາກອນລາຍໄດ້ຈາກທີ່ດິນ ແລະ ການທັບສິດນຳໃຊ້ທີ່ດິນຂອງລັດມາເປັນສິດນຳໃຊ້ທີ່ດິນຂອງບຸກ ຄົນ ຕາມກົດໝາຍ;

6. ລາຍງານສະພາບການຈັດຕັ້ງປະຕິບັດວຽກງານປະເມີນລາຄາທີ່ດິນທີ່ຕິດພັນກັບການມອບໂອນ ສິດນຳໃຊ້ທີ່ດິນ ລວມທັງການເກັບຄ່າທຳນຽມການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ການ ເກັບອາກອນລາຍໄດ້ຈາກທີ່ດິນ ແລະ ການທັບສິດນຳໃຊ້ທີ່ດິນຂອງລັດມາເປັນສິດນຳໃຊ້ທີ່ດິນຂອງບຸກຄົນ ໃຫ້ອົງການປົກຄອງແຂວງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເປັນປົກ ກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ**

ໃນວຽກງານການປະເມີນລາຄາທີ່ດິນ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ຕິດປະກາດແຜນທີ່ເຂດປະເມີນລາຄາ ແລະ ຕາຕະລາງລາຄາທີ່ດິນຢູ່ໃນ ເມືອງຂອງຕົນ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

2. ຄິດໄລ່ຄ່າທຳນຽມ, ອາກອນລາຍໄດ້ຈາກທີ່ດິນ ແລະ ຄ່າທັບສິດນຳໃຊ້ທີ່ດິນ ແລ້ວສົ່ງມອບໃຫ້ ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນເມືອງ ເປັນຜູ້ເກັບ ຕາມກົດໝາຍ ແລະ ລະບຽບການ;

3. ເຂົ້າຮ່ວມໃນການຄົ້ນຄ້ວາ, ປະເມີນ ແລະ ປັບປຸງລາຄາທີ່ດິນໃນແຕ່ລະໄລຍະ ແລ້ວລາຍງານໃຫ້ອົງການປົກຄອງເມືອງ;

4. ປະສານສົມທົບກັບຫ້ອງການກ່ຽວຂ້ອງຂອງເມືອງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

5. ລາຍງານສະພາບການຈັດຕັ້ງປະຕິບັດວຽກງານປະເມີນລາຄາທີ່ດິນທີ່ຕິດພັນກັບການມອບໂອນສິດນຳໃຊ້ທີ່ດິນ ລວມທັງການເກັບຄ່າທຳນຽມການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ການເກັບອາກອນລາຍໄດ້ຈາກທີ່ດິນ ແລະ ການຫັນສິດນຳໃຊ້ທີ່ດິນຂອງລັດມາເປັນສິດນຳໃຊ້ທີ່ດິນຂອງບຸກຄົນໃຫ້ອົງການປົກຄອງເມືອງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໂຄສະນາເຜີຍແຜ່ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບນີ້ ເພື່ອໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈພ້ອມທັງໃຫ້ຄວາມຮ່ວມມື;

1. ຢັ້ງຢືນຄວາມຖືກຕ້ອງບັນດານິຕິກຳກ່ຽວກັບທີ່ດິນ;

2. ປະຕິບັດວຽກງານອື່ນໆ ກ່ຽວກັບທີ່ດິນ ຕາມການມອບໝາຍຂອງຫ້ອງການ ຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມເມືອງ.

**ມາດຕາ 18 ອົງການຕິດຕາມກວດກາພາຍໃນ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງປະເມີນລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 14ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 19 ອົງການຕິດຕາມກວດກາພາຍນອກ**

ອົງການກວດກາພາຍນອກປະກອບມີ:

1. ສະພາປະຊາຊົນແຂວງ;
2. ອົງການກວດກາລັດແຂວງ;
3. ອົງການແນວລາວສ້າງຊາດແຂວງ;
4. ສື່ມວນຊົນ.

**ມາດຕາ 20 ເນື້ອໃນການກວດກາ**

ການກວດກາການປະເມີນລາຄາທີ່ດິນມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກຳສະບັບນີ້;

2. ກວດກາການເຄື່ອນໄຫວການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ໃນການປະເມີນລາຄາທີ່ດິນ;

3. ກວດກາການປະເມີນລາຄາທີ່ດິນ ຂອງເຈົ້າຂອງສິດນຳໃຊ້ທີ່ດິນ ໃນການຊື້-ຂາຍ, ມອບໂອນ,ແລກປ່ຽນອື່ນໆ.

**ມາດຕາ 21 ຮູບການກວດກາ**

ການກວດກາມີ 3 ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນປະຕິບັດວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ດຳເນີນຄະດີທາງອາຍາ ຕາມກໍລະນີໜັກ ຫຼື ເບົາ, ລວມທັງການໃຊ້ແທນຄ່າເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ພະແນກການ, ອົງການທຽບເທົ່າອ້ອມຂ້າງຂັ້ນແຂວງ, ຫ້ອງການ, ອົງການທຽບເທົ່າອ້ອມຂ້າງຂັ້ນເມືອງ ບຸກຄົນ, ນິຕິບຸກຄົນ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນຜູ້ຮັບຜິດຊອບໂຄສະນາເຜີຍແຜ່ເນື້ອໃນ ຂໍ້ຕົກລົງສະບັບນີ້ໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ພິມລົງຈົດໝາຍເຫດທາງລັດຖະການສິບຫ້າວັນເປັນຕົ້ນໄປ.

ເຈົ້າແຂວງຫົວພັນ

ວັນໄຊ ແພງສຸມມາ
Vanxay PHENGSOUMMA